ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

1880

ກະຊວງ ອຸດສາຫະກຳ ແລະ ການຄ້າ ເລກທີ /ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 05 SEP 2012

ຂໍ້ຕົກລົງ

ວ່າດ້ວຍການມອບສິດໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫລ່ງກຳເນີດສິນຄ້າທີ່ໄດ້ສິດພິເສດ

(Preferential Certificates of Origin)

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະການຄ້າ ສະບັບເລກທີ 188/ນຍ, ລົງວັນທີ 17 ສິງຫາ 2006.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍແຫລ່ງກຳເນີດສິນຄ້ານຳເຂົ້າ ແລະສົ່ງອອກ ສະບັບເລກທີ 228/ນຍ, ລົງວັນທີ 22 ເມສາ 2010.
- ອີງຕາມການສະເໜີຂອງກົມການນຳເຂົ້າ ແລະ ສົ່ງອອກ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າອອກຂໍ້ຕົກລົງ:

ມາດຕາ 1: ມອບສິດໃຫ້ພະແນກ ອຸດສາຫະກຳ ແລະ ການຄ້າ ນະຄອນຫລວງວຽງຈັນ ເປັນຜູ້ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫລ່ງກຳເນີດສິນຄ້າທີ່ໄດ້ສິດພິເສດນັບແຕ່ວັນທີ 1 ຕຸລາ 2012 ເປັນຕົ້ນໄປ ດັ່ງນີ້:

1.1 ຟອມ ເອ (Certificate of Origin Form A) ທີ່ອອກໃຫ້ແກ່ສິນຄ້າມີແຫຼ່ງກຳເນີດ ໂດຍການນຳໃຊ້ວັດຖຸດິບພາຍໃນປະເທດທັງໝົດ ເຂົ້າໃນຂະບວນການຜະລິດ ແລະ ປຸງແຕ່ງ ທີ່ໄດ້ລະບຸໄວ້ຢູ່ໃນຂໍ້ 1 ມາດຕາ 7 ຂອງດຳລັດເລກທີ 228/ນຍ ລົງວັນທີ 22 ເມສາ 2010.

1.2 ຟອມ DFTP (Certificate of Origin Form DFTP) ອອກໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດທາງດ້ານພາສີນຳເຂົ້າ ທີ່ປະເທດອິນເດຍ ໃຫ້ແກ່ ສປປ ລາວ ແບບຝ່າຍດຽວ;

1.3 ຟອມ ເອສ໌ (Certificate of Origin Form S) ອອກໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດທາງດ້ານພາສີນຳເຂົ້າພາຍໃຕ້ສັນຍາແບບທະວິພາຄີລະຫວ່າງສປປ ລາວ ກັບ ສສ ຫວຽດນາມ;

1.4 ຟອມ ດີ (Certificate of Origin Form D) ອອກໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດທາງດ້ານພາສີນຳເຂົ້າພາຍໃຕ້ເຂດການຄ້າເສລີອາຊຽນ;

1.5 ຟອມ APTA (Certificate of Origin Form APTA) ອອກໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດທາງດ້ານພາສີນຳເຂົ້າພາຍໃຕ້ສັນຍາການຄ້າອາຊີ-ປາຊີຟິກ; ແລະ

1.6 ຟອມ AI (Certificate of Origin Form AI) ອອກໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດທາງດ້ານພາສີນຳເຂົ້າພາຍໃຕ້ເຂດການຄ້າເສລີອາຊຽນ-ອິນເດຍ.

ມາດຕາ 2: ພະແນກ ອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ມີໜ້າທີ່ໃນການຄຸ້ມຄອງ ແລະ ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າດັ່ງທີ່ໄດ້ລະບຸໄວ້ໃນມາດຕາ 1 ຂ້າງເທິງນີ້ ຕາມລະບຽບການທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ຢ່າງເຂັ້ມງວດ ແລະ ພ້ອມດຽວກັນນັ້ນ ກໍ່ຕ້ອງໄດ້ຮັບຜິດຊອບ ຕໍ່ກໍລະນີຕ່າງໆທີ່ເກີດຂຶ້ນບົນພື້ນຖານລະບຽບການທີ່ໄດ້ກຳນົດໄວ້.

ມາດຕາ 3: ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ປະສານສົມທົບກັບພະແນກ ອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ກະກຽມດ້ານເອກະສານ, ບົດແນະນຳ, ການຈັດຕັ້ງຝຶກອົບຮົມດ້ານວິຊາການ ແລະ ຂັ້ນຕອນການຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບລະບຽບການຂອງປະເທດພາຄີ ທີ່ກ່ຽວຂ້ອງ ພ້ອມທັງອອກແຈ້ງການເຖິງບັນດາຫົວໜ່ວຍທຸລະກິດພາຍໃນປະເທດຮັບຊາບຢ່າງທົ່ວເຖິງກ່ຽວກັບການມອບໂອນສິດດັ່ງກ່າວໃຫ້ພະແນກ ອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນຈັດຕັ້ງປະຕິບັດ.

ມາດຕາ 4: ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ສືບຕໍ່ປະຕິບັດໜ້າທີ່ ໃນການເຂົ້າຮ່ວມກອງປະຊຸມເຈເຈລະຈາວຽກງານແຫຼ່ງກຳເນີດສິນຄ້າໃນແຕ່ລະກອບ ຕາມການມອບໝາຍຂອງກະຊວງ ອຸດສາຫະກຳ ແລະ ການຄ້າ ແລະ ລັດຖະບານ ເພື່ອຮັບປະກັນຄວາມເປັນເອກະພາບ ແລະ ສອດຄ່ອງກັບຫຼັກການຈັດຕັ້ງປະຕິບັດຂອງພາກພື້ນ ແລະ ສາກົນ.

ມາດຕາ 5: ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ຄົ້ນຄວ້າ ແລະ ອອກນິຕິກຳວ່າດ້ວຍການ ຄຸ້ມຄອງການອອກໃບຢັ້ງຢືນແຫ່ງກຳເນີດສິນຄ້າຂອງ ສປປ ລາວ ໃຫ້ເປັນເອກະພາບ ທັງຮັບປະກັນໃຫ້ການຈັດຕັ້ງປະຕິບັດມີຄວາມສະດວກ, ວ່ອງໄວ, ໂປ່ງໃສ ແລະ ເອື້ອອຳນວຍຄວາມສະດວກໃຫ້ແກ່ທຸລະກິດໃນການນຳເຂົ້າ ແລະ ສົ່ງອອກສິນຄ້າ, ຕິດຕາມການຈັດຕັ້ງປະຕິບັດ, ແກ້ໄຂບັນຫາ ຫຼື ຂໍ້ສົງໄສກ່ຽວກັບຄວາມຖືກຕ້ອງຂອງແຫຼ່ງກຳເນີດສິນຄ້າ, ສົມທົບກວດກາຂັ້ນຕອນ ຫຼື ຂະບວນການຜະລິດເພື່ອຢັ້ງຢືນການໄດ້ເງື່ອນໄຂແຫຼ່ງກຳເນີດສິນຄ້າ ແລະ ອື່ນໆ (ກໍລະນີຈຳເປັນ).

ມາດຕາ 6: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ.

ນຳສົ່ງ:- ທ່ານລັດຖະມົນຕີຊ່ວຍວ່າການ ເພື່ອຊາບ
- ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ເພື່ອຊາບ.
- ກົມພາສີ, ກະຊວງການເງິນ ເພື່ອຊາບ
- ພະແນກ ອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ເພື່ອຊາບ ແລະ ປະຕິບັດ

ດຣ. ນາມ ວິຍະເກດ